ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ກອງທຶນຫລຸດຜ່ອນຄວາມທຸກຍາກ**

ບ້ານ: __________, ກຸ່ມບ້ານ: ____________ ວັນທີ: ____/____/2020

ເມືອງ: _________, ແຂວງ: ______________

# ຂໍ້ຕົກລົງ

## ຈັດຕັ້ງປະຕິບັດໂຄງການຍ່ອຍ ລະຫວ່າງ ທລຍ ກັບ ຊຸມຊົນ

ລະຫັດໂຄງການຍ່ອຍເລກທີ: ____________________________________________________________

ຊື່ໂຄງການ: ______________________________________________________________________

ທີ່ຕັ້ງໂຄງການບ້ານ______________, ກຸ່ມບ້ານ ___________, ເມືອງ __________, ແຂວງ _____________

**ຂໍ້ກຳນົດ ແລະ ເງື່ອນໄຂ ສຳລັບການສະໜັບສະໜູນທຶນຊ່ວຍເຫລືອ ຈາກ ທລຍ ໃຫ້ບ້ານ ດັ່ງນີ້:**

1. **ຝ່າຍຕ່າງໆໃນຂໍ້ຕົກລົງ**

1.1. ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ມີຖານະໃນຂໍ້ຕົກລົງສະບັບນີ້ ເຊິ່ງຕໍ່ໄປນີ້ເອີ້ນວ່າ "**ຜູ້ສະໜັບສະໜູນທຶນ**" ໄດ້ແຕ່ງຕັ້ງຫົວໜ້າທີມ ທລຍ ເມືອງ ໃຫ້ເປັນຜູ້ຕາງໜ້າ ໃຫ້ແກ່ຜູ້ສະໜັບສະໜູນທຶນ, ປະຈຳຢູ່ຫ້ອງການ ທລຍ ເມືອງ: ____________, ແຂວງ ___________, ສປປ ລາວ.

1.2. ທີມງານຈັດຕັ້ງປະຕິບັດບ້ານ ເຊິ່ງມີຖານະໃນຂໍ້ຕົກລົງສະບັບນີ້ ເຊິ່ງຕໍ່ໄປນີ້ເອີ້ນວ່າ "**ທີມງານບ້ານ**", ເປັນຕົວແທນໃຫ້ແກ່ປະຊາຊົນພາຍໃນບ້ານ ເປັນຜູ້ທີ່ໄດ້ຜ່ານຂະບວນການການຄັດເລືອກພາຍໃນບ້ານ ປະກອບດ້ວຍບັນດາທ່ານ ດັ່ງລຸ່ມນີ້:

1. ທ່ານ. ______________________________, ຕຳແໜ່ງ: ______________________
2. ທ່ານ. ______________________________, ຕຳແໜ່ງ: ______________________
3. ທ່ານ. ______________________________, ຕຳແໜ່ງ: ______________________

(ອີງຕາມເອກະສານຄັດຕິດ ກ່ຽວກັບບົດບັນທຶກກອງປະຊຸມ ການຕົກລົງແຕ່ງຕັ້ງທີມງານຈັດຕັ້ງປະຕິບັດບ້ານ)

2. **ສິດ, ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ຂອງທັງສອງຝ່າຍ ໃນຂໍ້ຕົກລົງ**

2.1. **ສິດ, ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ຂອງທີມງານບ້ານ**

2.1.1. ຮັບຜິດຊອບໃນການຈັດຕັ້ງປະຕິບັດໂຄງການ, ຄຸ້ມຄອງ, ຕິດຕາມກວດກາ, ເບີກຈ່າຍ ແລະ ລາຍງານ;

2.1.2. ຮັບຜິດຊອບໃນການດຳເນີນຂັ້ນຕອນການທາບທາມລາຄາ ວັດສະດຸການກໍ່ສ້າງ ແລະ ອື່ນໆ ຕາມລະບຽບ ຫລັກການ ແລະ ຂັ້ນຕອນ ທີ່ໄດ້ກຳນົດໄວ້ຂອງໂຄງການຢ່າງເຂັ້ມງວດ;

2.1.3. ຮັບຜິດຊອບວຽກບໍລິຫານການເງິນ ແລະ ບັນຊີ ແລະ ຕ້ອງປະຕິບັດຕາມລະບຽບການບໍລິຫານການເງິນ ທີ່ກຳນົດໄວ້ ຂອງໂຄງການ;

2.1.4. ຮັບຜິດຊອບຕໍ່ການເກີດອຸບັດຕິເຫດໃດກໍ່ຕາມ ທີ່ກໍ່ໃຫ້ເກີດມີການບາດເຈັບ, ໜີ້ສິນ ຫລື ຄວາມເສຍຫາຍ ທີ່ເກີດຂື້ນຈາກການຈັດຕັ້ງປະຕິບັດໂຄງການ ຫລື ການກໍ່ສ້າງ;

2.1.5. ຕ້ອງໃຫ້ມີປື້ມບັນທຶກການເຮັດວຽກຕ່າງໆ ຕາມຂໍ້ກຳນົດທີ່ລະບຸໄວ້ໃນປື້ມຈັດຕັ້ງປະຕິບັດໂຄງການ ເພື່ອ ສະໜອງຂໍ້ມູນຕ່າງໆກ່ຽວກັບໂຄງການ;

2.1.6. ຕ້ອງມີແຜນການເຮັດວຽກ ແລະ ແຜນບົວລະບັດຮັກສາ ສະໜອງໃຫ້ໂຄງການ ເພື່ອຮັບປະກັນໃຫ້ແກ່ການ ນຳໃຊ້ແບບຍືນຍົງຂອງກິດຈະກຳທີ່ໄດ້ສ້າງຂື້ນ ພາຍໃຕ້ໂຄງການດັ່ງກ່າວ ຕາມມາດຕະຖານທົ່ວໄປ ທີ່ໄດ້ ກຳນົດໄວ້ໃນປື້ມຄູ່ມືຈັດຕັ້ງປະຕິບັດໂຄງການ ຂອງ ທລຍ ແລະ ຈະຕ້ອງໄດ້ປະຕິບັດຕາມແຜນບົວລະບັດ ຮັກສາບັນດາໂຄງການທີ່ໄດ້ກຳນົດໄວ້;

2.1.7. ຕ້ອງມີຄວາມຮັບຜິດຊອບສູງ ຕໍ່ບັນດາຂໍ້ຕົກລົງ ເຊິ່ງຮຽກຮ້ອງໃຫ້ມີສ່ວນຮ່ວມ ແລະ ປະກອບສ່ວນຈາກ ປະຊາຊົນພາຍໃນບ້ານ. ຖ້າຫາກວ່າ ປະຊາຊົນບໍ່ປະຕິບັດຕາມບັນດາຂໍ້ຕົກລົງທີ່ໄດ້ລະບຸໄວ້ໃນຂໍ້ຕົກລົງນີ້, ຈະສົ່ງຜົນສະທ້ອນໃຫ້ການຈັດຕັ້ງປະຕິບັດໂຄງການບໍ່ສຳເລັດ. ດ້ວຍເຫດນີ້, ບ້ານຈະຕ້ອງໄດ້ເປັນຜູ້ຮັບຜິດ ຊອບ ຕໍ່ກັບບັນຫາດັ່ງກ່າວທີ່ເກີດຂື້ນທັງໝົດ;

2.1.8. ຕ້ອງຮັບປະກັນວ່າ ຈະປົກປັກຮັກສາທຳມະຊາດ ແລະ ສະພາບແວດລ້ອມ ທີ່ຢູ່ໃນຂອບເຂດ ແລະ ບໍລິເວນ ອ້ອມຮອບສະຖານທີ່ກໍ່ສ້າງໂຄງການ ໃຫ້ມີຄວາມຈົບງາມ ແລະ ຢູ່ໃນສະພາບທີ່ດີ. ນອກຈາກນີ້, ກໍ່ຕ້ອງ ຮັບປະກັນວ່າທຳມະຊາດ ແລະ ສະພາບແວດລ້ອມພາຍໃນບໍລິເວນດັ່ງກ່າວ ຈະບໍ່ຖືກທຳລາຍ ຈາກການ ປະຕິບັດກິດຈະກຳຂອງໂຄງການ. ຖ້າຫາກເກີດມີກໍລະນີດັ່ງກ່າວ, ຊຸມຊົນຈະຕ້ອງໄດ້ລາຍງານໃຫ້ຫ້ອງການ ທລຍ ແລະ ພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຊາບໃນທັນທີ;

2.1.9. ຕ້ອງປະຕິບັດທຸກໆວຽກໃຫ້ສອດຄ່ອງກັບກົດໝາຍ, ຂໍ້ບັງຄັບ ແລະ ກົດລະບຽບ ຂອງລັດຖະບານ ສປປ ລາວ ທີ່ມີຄວາມເໝາະສົມ ສຳລັບໂຄງການ, ແຕ່ວ່າບໍ່ອາດຈຳກັດ ເປັນຕົ້ນແມ່ນການຮັກສາຄວາມປອດໄພ ແລະ ຄວາມສະຫງົບ ຂອງການບໍລິຫານພາກສະໜາມ ລວມເຖິງວິທີຂອງການກໍ່ສ້າງ, ກົດລະບຽບການ ຈາລະຈອນ ແລະ ສົ່ງເສີມການປົກປັກຮັກສາສິ່ງແວດລ້ອມຕ່າງໆ;

2.1.10. ຕ້ອງໃຫ້ຄວາມຮ່ວມມືກັບໂຄງການ ໃນເວລາລົງມາຕິດຕາມກິດຈະກຳຕ່າງໆ;

2.1.11. ບໍ່ອະນຸຍາດໃຫ້ມອບວຽກທັງໝົດ ຫລື ມອບວຽກສ່ວນໃດສ່ວນໜຶ່ງ ໃຫ້ກັບບໍລິສັດຜູ້ຮັບເໝົາອື່ນໆ ໂດຍ ບໍ່ໄດ້ຮັບການຕົກລົງເຫັນດີກ່ອນຈາກຜູ້ສະໜັບສະໜູນທຶນ.

## 2.2. ສິດ, ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ຂອງ ທລຍ

2.2.1. ຮັບຜິດຊອບໃນການສະໜັບສະໜູນທຶນ ແລະ ເບີກຈ່າຍເງິນ ໃຫ້ບ້ານ ຕາມມູນຄ່າທີ່ກຳນົດໄວ້ ສຳລັບການ ກໍ່ສ້າງທີ່ສຳເລັດ ຕາມໄລຍະເວລາທີ່ກຳນົດໄວ້.

2.2.2. ສະໜອງການຊ່ວຍເຫລືອທີ່ຈຳເປັນ ແລະ ຝຶກອົບຮົມໃຫ້ແກ່ທີມງານບ້ານ ເພື່ອຮັບປະກັນວ່າ ທີມງານບ້ານ ຈະຈັດຕັ້ງປະຕິບັດໂຄງການ ໄປຕາມຂໍ້ກຳນົດລະບຽບຫັລກການ ແລະ ຂັ້ນຕອນ ທີ່ກຳນົດໄວ້ ແລະ ສາມາດຈັດຕັ້ງປະຕິບັດໃຫ້ສຳເລັດຕາມກຳນົດເວລາ.

2.2.3. ມີສິດໃນການກວດກາການປະຕິບັດໂຄງການຍ່ອຍ ນັບຈາກມື້ເລີ່ມຕົ້ນ ຈົນຮອດມື້ສຳເລັດວຽກ, ແລະ ມີ ສິດໃນການກວດກາວັດສະດຸການກໍ່ສ້າງ ໄດ້ທຸກເວລາ ໃນໄລຍະເວລາການກໍ່ສ້າງ.

2.2.4. ເປັນຜູ້ພິຈາລະນາຕັດສິນ ໃນການເຊັນສັນຍາ, ໃນການສັ່ງຢຸດຊົ່ວຄາວ ຫລື ຍົກເລີກສັນຍາທັງໝົດ (ສັນຍາ ຊຸມຊົນ ກັບ ຮ້ານ ຫລື ຜູ້ຮັບເໝົາ), ຖ້າເຫັນວ່າຈຳເປັນ.

2.2.5. ມີສິດທີ່ຈະຢຸດກິດຈະກຳໃດນຶ່ງທີ່ອາດຈະສົ່ງຜົນກະທົບ ຫລື ສົ່ງຜົນຮ້າຍແຮງຕໍ່ທຳມະຊາດ ແລະ ສະພາບແວດລ້ອມ ທີ່ຢູ່ໃນຂອບເຂດອ້ອມຮອບທີ່ຕັ້ງຂອງໂຄງການ.

3. **ຈຸດປະສົງຂອງຂໍ້ຕົກລົງ**

ອີງຕາມການຕົກລົງເຫັນດີສະໜັບສະໜູນທຶນ ໃຫ້ແກ່ບ້ານ ຕາມບົດສະເໜີໂຄງການຍ່ອຍ ກ່ຽວກັບຊື່ໂຄງການຍ່ອຍທີ່ໄດ້ລະບຸໄວ້ຂ້າງເທິງ (ລະອຽດສະເໜີເບິ່ງບົດສະເໜີໂຄງການ).

4. **ເອກະສານທີ່ປະກອບເປັນຂໍ້ຕົກລົງ** ເອກະສານທີ່ປະກອບເປັນຂໍ້ຕົກລົງ ມີດັ່ງນີ້:

4.1. ຂໍ້ຕົກລົງ ລະຫວ່າງ ທລຍ ກັບ ຊຸມຊົນ;
4.2. ບົດສະເໜີໂຄງການຍ່ອຍ;
4.3. ບົດບັນທຶກແຕ່ງຕັ້ງທີມງານບ້ານ, ເອກະສານແຈ້ງການ ແລະ ເອກະສານອື່ນໆທີ່ຖືກຕ້ອງຕາມກົດໝາຍ;
4.4. ເອກະສານແຈ້ງການອະນຸມັດນຳໃຊ້ທີ່ດິນ, ຖ້າມີ;
4.5. ແບບການກໍ່ສ້າງທີ່ໄດ້ຮັບການອະນຸມັດແລ້ວ, ແຜນຜັງສະຖານທີ່ກໍ່ສ້າງ, ແລະ ມູນຄ່າປະເມີນໄວ້ຂອງໂຄງການຍ່ອຍ;
4.6. ບົດບັນທຶກການຄັດເລືອກນາຍຊ່າງ, ກຳມະກອນ, ວິຊາການຊຸມຊົນ;
4.7. ເອກະສານການທາບທາມລາຄາ ວັດສະດຸການ ແລະ ອຸປະກອນກໍ່ສ້າງຄົບຊຸດ;
4.8. ບົດບັນທຶກການວ່າຈ້າງຜູ້ຮັບເໝົາ;
4.9. ບົດບັນທຶກ ການກວດກາຄວາມຄືບໜ້າ ການສຳເລັດວຽກການກໍ່ສ້າງ, ສົ່ງມອບວັດສະດຸການກໍ່ສ້າງ ແລະ ເບີກຈ່າຍ.

5. **ລາຍລະອຽດກ່ຽວກັບໂຄງການຍ່ອຍ** - ສະເໜີເບິ່ງໃນບົດສະເໜີໂຄງການ

6. **ມູນຄ່າໂຄງການ ແລະ ເງື່ອນໄຂການເບີກຈ່າຍ**

6.1. ຂໍ້ຕົກລົງສະບັບນີ້ ມີມູນຄ່າທັງໝົດບໍ່ເກີນ ______________________________ ກີບ
ຂຽນເປັນໂຕໜັງສື ____________________________________________________________

6.2. ເງື່ອນໄຂການເບີກຈ່າຍລະອຽດດັ່ງນີ້:

1. ງວດທີ 1 - ເບີກຈ່າຍລ່ວງໜ້າ (ພາຍຫລັງການເຊັນຂໍ້ຕົກລົງ)
- ຈ່າຍ 95% ຂອງມູນຄ່າຂໍ້ຕົກລົງ ຫລື ເທົ່າກັບຈຳນວນ ______________________________ ກີບ
ຂຽນເປັນໂຕໜັງສື: ____________________________________________________________

2. ງວດທີ 2 - ເບີກຈ່າຍລ່ວງໜ້າ
- ຈ່າຍ 5% ຂອງມູນຄ່າຂໍ້ຕົກລົງ ຫລື ເທົ່າກັບຈຳນວນ ______________________________ ກີບ
ຂຽນເປັນໂຕໜັງສື: ____________________________________________________________

6.3. ທີມງານບ້ານ ຕ້ອງໄດ້ຂຽນ ແລະ ຍື່ນໜັງສືສະເໜີຂໍເບີກຈ່າຍ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ຂອງລະບຽບບໍລິຫານການເງິນ. ຫລັງຈາກທີ່ຜູ້ສະໜັບສະໜູນທຶນ ໄດ້ຮັບໜັງສືສະເໜີຂໍເບີກຈ່າຍ ຈາກທີມງານບ້ານແລ້ວ ຈຶ່ງຈະເບີກຈ່າຍເງິນດັ່ງກ່າວໃຫ້ທີມງານບ້ານ ຕາມຈຳນວນ ແລະ ຕາມກຳນົດເວລາທີ່ໄດ້ລະບຸໄວ້ໃນຂໍ້ຕົກລົງ.

7. **ການຊີ້ນຳໂຄງການ**

7.1. ຜູ້ສະໜັບສະໜູນທຶນ. ຈະຕ້ອງໄດ້ໃຫ້ການຊີ້ນຳໃນການຈັດຕັ້ງປະຕິບັດໂຄງການ ນັບແຕ່ເລີ້ມຕົ້ນຈົນສຳເລັດ;

7.2. ທີມງານບ້ານ ຈະຕ້ອງໃຫ້ຄຳໝັ້ນສັນຍາວ່າ ຈະຈັດຕັ້ງປະຕິບັດກິດຈະກຳໂຄງການ ໃຫ້ຖືກຕ້ອງຕາມລະບຽບຫລັກການ, ຂັ້ນຕອນ ແລະ ຈຸດປະສົງຂອງໂຄງການ.

8. **ຂັ້ນຕອນການເບີກຈ່າຍ**

8.1. ທຸກໆການເບີກຈ່າຍ ພາຍໃຕ້ຂໍ້ຕົກລົງສະບັບນີ້ ຈະຕ້ອງໄດ້ເບີກຈ່າຍ ໂດຍການໂອນເງິນເຂົ້າບັນຊີຂອງບ້ານ.

8.2. ທຸກໆການເບີກຈ່າຍ ນັບຕັ້ງແຕ່ງວດທຳອິດ ຈົນຮອດການເບີກຈ່າຍງວດສຸດທ້າຍ ຈົນສຳເລັດໂຄງການ ຈະຕ້ອງໄດ້ປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້:

1. ທີມງານບ້ານ ຕ້ອງສົ່ງເອກະສານສະເໜີຂໍເບີກຈ່າຍ ຫາຜູ້ສະໜັບສະໜູນທຶນ, ການເບີກຈ່າຍ ແມ່ນອີງຕາມເງື່ອນໄຂຂອງການເບີກຈ່າຍທີ່ລະບຸໄວ້ໃນຂໍ້ຕົກລົງ;
2. ການສະເໜີຂໍເບີກຈ່າຍ ແມ່ນຈະຖືກອະນຸມັດ ໂດຍ ທລຍ ໂດຍອີງຕາມບົດບັນທຶກການປະເມີນຄວາມຄືບໜ້າ, ແລະ ການປະເມີນດ້ານມາດຕະຖານເຕັກນິກຂອງການກໍ່ສ້າງ ໃນແຕ່ລະໜ້າວຽກ ໃນແຕ່ລະໄລຍະຂອງການກໍ່ສ້າງ;
3. ໃນກໍລະນີ, ຫາກຜູ້ສະໜັບສະໜູນທຶນ. ບໍ່ສາມາດຍອມຮັບເອົາການສະເໜີຂໍເບີກຈ່າຍເງິນ ຈາກທີມງານບ້ານ ທີ່ຍື່ນສະເໜີມາ, ຜູ້ສະໜັບສະໜູນທຶນ. ຈະຕ້ອງໄດ້ມີການປຶກສາຫາລືລາຍລະອຽດ ກັບທີມງານບ້ານເພື່ອຊອກຫາວິທີແກ້ໄຂດັ່ງກ່າວໃຫ້ສຳເລັດເສຍກ່ອນ ຈຶ່ງຈະດຳເນີນຂັ້ນຕອນອະນຸມັດການເບີກຈ່າຍໃຫ້ ແລະ ຈະຕ້ອງໄດ້ແຈ້ງໃຫ້ແຕ່ລະພາກສ່ວນຮັບຊາບເປັນລາຍລັກອັກສອນ.

9. **ການຍົກເລີກຂໍ້ຕົກລົງ**

9.1. ຂໍ່ຕົກລົງສະບັບນີ້ ອາດຈະຖືກຢຸດຕິຊົ່ວຄາວ ຫລື ອາດຈະມີການຍົກເລີກທັງໝົດ ຖ້າຫາກຕົກຢູ່ໃນກໍລະນີ ດັ່ງຕໍ່ໄປນີ້:

1. ຝ່າຍໃດຝ່າຍໜຶ່ງ ບໍ່ສາມາດປະຕິບັດພັນທະທີ່ໄດ້ຕົກລົງກັນໄວ້ ໃນຂໍ້ຕົກລົງສະບັບນີ້;
2. ຖ້າຫາກວ່າ ການຄັດເລືອກເອົາຮ້ານຂາຍເຄື່ອງວັດສະດຸກໍ່ສ້າງ / ຜູ້ຮັບເໝົາ / ນາຍຊ່າງ / ກຳມະກອນ / ວິຊາການຊຸມຊົນ ຂອງທີມງານບ້ານ ບໍ່ປະຕິບັດຕາມລະບຽບຫລັກການ ແລະ ຂັ້ນຕອນ ທີ່ກຳນົດໄວ້;
3. ໃນເວລາທີ່ພົບເຫັນວ່າ ທີມງານບ້ານມີການພົວພັນທີ່ກ່ຽວຂ້ອງກັບການສໍ້ລາດບັງຫລວງ, ການສໍ້ໂກງ, ການບີບບັງຄັບ, ການສົມຮູ້ຮ່ວມຄິດ ແລະ ການຂັດຂວາງ ໃນຂະບວນການທາບທາມລາຄາ;
4. ໃນກໍລະນີທີ່ຜູ້ສະໜັບສະໜູນທຶນ. ໄດ້ຕັດສິນວ່າ ຄຸນນະພາບທາງດ້ານເຕັກນິກຂອງການກໍ່ສ້າງບໍ່ຖືກຕ້ອງຕາມບົດລາຍງານ ເຊິ່ງອາດຈະສົ່ງຜົນກະທົບໃຫ້ແກ່ໂຄງການເກີດມີຄວາມສ່ຽງ ໃນການຈັດຕັ້ງປະຕິບັດໂຄງການບໍ່ສຳເລັດ;

9.2. ໃນກໍລະນີ ທີ່ຜູ້ສະໜັບສະໜູນທຶນ ຈະຕັດສິນໃຫ້ຍົກເລີກຂໍ້ຕົກລົງ, ຜູ້ສະໜັບສະໜູນທຶນ ຈະເຮັດໜັງສືສະເໜີຫາທີມງານບ້ານ ແລະ ໃຫ້ເວລາແກ່ທີມງານບ້ານ ເພື່ອແກ້ໄຂບັນຫາຕ່າງໆໃຫ້ສຳເລັດຢ່າງເປັນທີ່ເພິ່ງພໍໃຈກ່ອນ. ກ່ອນ ຈະຍົກເລີກຂໍ້ຕົກລົງ.

10. **ການດັດແກ້ຂໍ້ຕົກລົງ**

ການດັດແກ້ຂໍ້ກໍານົດຕ່າງໆໃນຂໍ້ຕົກລົງສະບັບນີ້ ສາມາດເຮັດໄດ້ ກໍ່ຕໍ່ເມື່ອມີການຕົກລົງເຫັນດີຈາກທັງສອງ.

11. **ຂໍ້ຫ້າມຕ່າງໆ** - ສໍາລັບໂຄງການທີ່ຊຸມຊົນເປັນຜູ້ກໍ່ສ້າງເອງ

11.1. ຫ້າມບໍ່ໃຫ້ຊຸມຊົນນໍາໃຊ້ເຄື່ອງມື ແລະ ກົນຈັກໜັກ ທີ່ບໍ່ໄດ້ລະບຸໄວ້ໃນຕາຕະລາງລາຍການຄິດໄລ່ລາຄາຂອງໂຄງການເຂົ້າໃນການກໍ່ສ້າງ.

1.1. ຫ້າມບໍ່ໃຫ້ຊຸມຊົນ ສະເໜີຜູ້ທີ່ຮັບເຮັດວຽກກິດຈະກໍາຂອງໂຄງການ ເຮັດວຽກໃຫ້ໂດຍບໍ່ມີຄ່າຕອບແທນ ໃນບັນດາໜ້າວຽກທີ່ຈະຕ້ອງຈ່າຍ ພາຍໃຕ້ຂໍ້ຕົກລົງສະບັບນີ້, ຜູ້ສະໜັບສະໜູນທຶນມີສິດໃນການສະລໍການເບີກຈ່າຍ, ແລະ ຢຸດຕິຊົ່ວຄາວ ຫລື ຍົກເລີກຂໍ້ຕົກລົງທັງໝົດ.

1.2. ບໍ່ອະນຸຍາດໃຫ້ຊຸມຊົນ ເຮັດສັນຍາຍ່ອຍກັບບໍລິສັດຜູ້ຮັບເໝົາ ຫລື ບຸກຄົນທີສາມ ໃນການກໍ່ສ້າງ ພາຍໃຕ້ຂໍ້ຕົກລົງສະບັບນີ້ ໂດຍທີ່ບໍ່ໄດ້ຮັບອະນຸຍາດກ່ອນ ຈາກຜູ້ສະໜັບສະໜູນທຶນ. ໃນກໍລະນີ, ຫາກຜູ້ສະໜັບສະໜູນທຶນ. ຫາກພົບເຫັນວ່າ ຊຸມຊົນໄດ້ເຮັດສັນຍາຍ່ອຍນໍາບໍລິສັດຜູ້ຮັບເໝົາອື່ນ ໂດຍບໍ່ໄດ້ຮັບການອະນຸມັດເປັນລາຍລັກອັກສອນຈາກຜູ້ສະໜັບສະໜູນທຶນ, ຜູ້ສະໜັບສະໜູນທຶນ ມີສິດຍົກເລີກຂໍ້ຕົກລົງ ແລະ ບໍ່ຈ່າຍຄ່າກໍ່ສ້າງ, ຄ່ານາຍຊ່າງກໍ່ສ້າງຊຸມຊົນ, ຄ່າເຄື່ອງວັດສະດຸກໍ່ສ້າງ, ຄ່າບໍລິຫານ, ຝຶກອົບຮົມ ແລະ ອື່ນໆ ທີ່ໄດ້ລົງມືຈັດຕັ້ງປະຕິບັດໄປກ່ອນແລ້ວໂດຍຊຸມຊົນ.

12. **ການເພີ່ມເຕີມສິ່ງຕ່າງໆໃນຂໍ້ຕົກລົງ**

ໃນກໍລະນີ ລາຍການກໍ່ສ້າງຂອງໂຄງການ ມີການເພີ່ມຂຶ້ນ (ເປັນຕົ້ນແມ່ນ: ຄ່າເຄື່ອງວັດສະດຸການກໍ່ສ້າງ, ຄ່ານາຍຊ່າງ, ຄ່າແຮງງານກໍາມະກອນ, ຄ່າວິຊາການຊຸມຊົນ ແລະ ອື່ນໆ) ໃນໄລຍະເວລາຈັດຕັ້ງປະຕິບັດໂຄງການຢູ່ນັ້ນ, ມູນຄ່າທີ່ເພີ່ມຂຶ້ນແມ່ນຕ້ອງໄດ້ຮັບອະນຸມັດຈາກຜູ້ສະໜັບສະໜູນທຶນ, ໂດຍມູນຄ່າທີ່ເພີ່ມຂຶ້ນແມ່ນບໍ່ໃຫ້ເກີນ 5% ຂອງລາຍການໜ້າວຽກທີ່ຍັງເຫລືອ ຂອງມູນຄ່າລວມທັງໝົດຕ້ອງແມ່ນມູນຄ່າເດີມຂອງຂໍ້ຕົກລົງ ບວກກັບສິ່ງທີ່ເພີ່ມເຕີມ (ການສັ່ງວຽກເພີ່ມ) ແຕ່ຕ້ອງຢູ່ພາຍໃຕ້ການຊີ້ນໍາຈາກຜູ້ສະໜັບສະໜູນທຶນ. ການຄິດໄລ່ຫົວໜ່ວຍລາຄາທີ່ເພີ່ມຂຶ້ນນັ້ນ ຈະຕ້ອງໄດ້ອີງຕາມລາຄາຫົວໜ່ວຍທີ່ມີການເກັບກໍາໃນຖານຂໍ້ມູນຂອງຜູ້ສະໜັບສະໜູນທຶນ.

13. **ການມອບສິດໃນການເຊັນ**

ທຸກໆເອກະສານ ກ່ຽວກັບການສະເໜີ ຫລື ການລາຍງານໂດຍກົງ ຫາຝ່າຍໃດຝ່າຍຫນຶ່ງ ທີ່ກ່ຽວພັນກັບຂໍ້ຕົກລົງສະບັບນີ້ ຈະຕ້ອງໄດ້ມີການລົງລາຍເຊັນ ໂດຍຜູ້ຕາງໜ້າທີ່ຖືກແຕ່ງຕັ້ງຂອງແຕ່ລະຝ່າຍ.

14. **ໄລຍະເວລາຂອງຂໍ້ຕົກລົງ**

ຊຸມຊົນ ຈະຕ້ອງໄດ້ໃຫ້ຄໍາໝັ້ນສັນຍາວ່າ ຈະຈັດຕັ້ງປະຕິບັດໂຄງການ ໃຫ້ສໍາເລັດ ພາຍໃນ _____ ວັນ, ໂດຍນັບເລີ່ມຈາກວັນທີ _____/____/2020 ຈົນຮອດວັນທີ ____/_____/2020.

15. **ການແກ້ໄຂຂໍ້ຂັດແຍ່ງຕ່າງໆ**

ທຸກໆຂໍ້ຂັດແຍ່ງ ຫລື ການບໍ່ລົງລອຍກັນທີ່ເກີດຂຶ້ນ ເນື່ອງຈາກການຕີຄວາມໝາຍ ຫລື ການປະຕິບັດຂໍ້ຕົກລົງສະບັບນີ້ ທີ່ບໍ່ສາມາດແກ້ໄຂກັນດ້ວຍສັນຕິວິທີໄດ້ ທັງສອງຝ່າຍຈະຕ້ອງໄດ້ຮັບການແກ້ໄຂ ໂດຍຜ່ານຂະບວນການຍຸດຕິທໍາ ແລະ ຕ້ອງໃຫ້ສອດຄ່ອງກັບລະບຽບກົດໝາຍ ຂອງ ສປປ ລາວ.

16. **ຂໍ້ຕົກລົງມີຜົນໃຊ້ໄດ້**

ຂໍ້ຕົກລົງສະບັບນີ້ ຈະມີຜົນໃຊ້ໄດ້ ເລີ່ມແຕ່ມື້ທີ່ລົງລາຍເຊັນ ຈາກທັງສອງຝ່າຍ ເປັນຕົ້ນໄປ.

**ສໍາລັບຫ້ອງການ ທລຍ**:

ຫົວໜ້າທີມ ທລຍ ເມືອງ ___________

ເຊັນ: _______________________

ຊື່: _________________________

**ສໍາລັບທີມງານບ້ານ:**

1) ທີມງານຈັດຊື້ບ້ານ

ລາຍເຊັນ: __________________________

ຊື່ ແລະ ຕໍາແຫນ່ງ: _____________________

2) ທີມງານການເງິນບ້ານ

ລາຍເຊັນ: __________________________

ຊື່ ແລະ ຕໍາແຫນ່ງ: _____________________

3) ທີມງານກໍ່ສ້າງບ້ານ

ລາຍເຊັນ: __________________________

ຊື່ ແລະ ຕໍາແຫນ່ງ: _____________________

**ສໍາລັບນາຍບ້ານ:**

ເຊັນ ແລະ ຈ້ໍາກາ: ________________________

ຊື່ ແລະ ຕໍາແຫນ່ງ: ________________________

**ສໍາລັບພະຍານ:**

1) ເຊັນ ແລະ ຈ້ໍາກາ: _________________________

ຊື່ ແລະ ຕໍາແຫນ່ງ: ________________________

2) ເຊັນ ແລະ ຈ້ໍາກາ: _________________________

ຊື່ ແລະ ຕໍາແຫນ່ງ: ________________________

3) ເຊັນ ແລະ ຈ້ໍາກາ: _________________________

ຊື່ ແລະ ຕໍາແຫນ່ງ: ________________________